**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 2369. /ກຂອ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2022

## ແຈ້ງການ

**ເຖິງ:** - ທ່ານ ປະທານສະມາຄົມຍານພາຫະນະ ແລະ ນ້ຳມັນເຊື້ອໄຟ.

- ບັນດາບໍລິສັດ ນຳເຂົ້າ ແລະ ສົ່ງອອກຍານພາຫະນະ ແລະ ນ້ຳມັນເຊື້ອໄຟ.

**ເລື່ອງ:** ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້າພາຫະນະ ຢູ່ດ້ານພາສີສາກົນຂົວມິດຕະພາບ 3, ດ່ານພາສີສາກົນນາເພົ້າ ແລະ ຫ້ອງການພາສີປະຈຳເຂດເສດຖະກິດສະເພາະທ່າແຂກ (ແຂວງຄຳມ່ວນ), ດ່ານພາສີສາກົນຂົວມິດຕະພາບ 2, ດ່ານພາສີສາກົນແດນສະຫວັນ, ຫ້ອງການພາສີປະຈຳເຂດເສດຖະກິດພິເສດສະຫວັນ-ເຊໂນ (ທ່າບົກ ແຂວງສະຫວັນນະເຂດ).

- ອີງຕາມ ແຈ້ງການ ຂອງຫ້ອງການ, ກະຊວງການເງິນ,ເລກທີ 1872/ຫກ.ລົງວັນທີ 15 ກໍລະກົດ 2022 ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າທົ່ວໄປ ແລະ ຍານພາຫະນະຢູ່ດ່ານພາສີສາກົນຂົວມິດຕະພາບ 3, ດ່ານພາສີນາເພົ້າ ແລະ ຫ້ອງການພາສີປະຈຳເຂດເສດຖະກິດສະເພາະທ່າແຂກ (ແຂວງຄຳມ່ວນ);
- ອີງຕາມ ແຈ້ງການ ຂອງຫ້ອງການ, ກະຊວງການເງິນ,ເລກທີ 1885/ຫກ.ລົງວັນທີ 18 ກໍລະກົດ 2022 ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າທົ່ວໄປ ແລະ ຍານພາຫະນະ ຢູ່ດ້ານພາສີສາກົນຂົວມິດຕະພາບ 2, ດ່ານພາສີແດນສະຫວັນ, ຫ້ອງການພາສີປະຈຳເຂດເສດຖະກິດພິເສດສະຫວັນ-ເຊໂນ(ທ່າບົກ ແຂວງສະຫວັນນະເຂດ).

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ໂດຍປະຕິບັດຕາມແຈ້ງການ ຂອງຫ້ອງການກະຊວງການເງິນ, ເລກທີ 1872/ຫກ, ລົງວັນທີ 15 ກໍລະກົດ 2022 ແລະ ເລກທີ 1885/ຫກ, ລົງວັນທີ 15 ກໍລະກົດ 2022. ນັບຕັ້ງແຕ່ 18 ກໍລະກົດ 2022 ກົມ ຂອ ຈະມີພິຈາລະນາອອກໃບອະນຸຍາດນຳເຂົ້າສິນຄ້າປະເພດພະຫະນະ, ນ້ຳມັນເຊື້ອໄຟ ທີ່ນຳຜ່ານດ່ານພາສີສາກົນຂົວມິດຕະພາບ 3, ດ່ານພາສີສາກົນນາເພົ້າ ແລະ ຫ້ອງການພາສີປະຈຳເຂດເສດຖະກິດສະເພາະທ່າແຂກ (ແຂວງຄຳມ່ວນ), ດ່ານພາສີສາກົນຂົວມິດຕະພາບ 2, ດ່ານພາສີສາກົນແດນສະຫວັນ, ຫ້ອງການພາສີປະຈຳເຂດເສດຖະກິດພິເສດສະຫວັນ-ເຊໂນ(ທ່າບົກ ແຂວງສະຫວັນນະເຂດ) ໂດຍຜ່ານລະບົບການແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ເທົ່ານັ້ນ. ບໍລິສັດ ນຳເຂົ້າ ແລະ

ສົ່ງອອກພາຫະນະ, ນ້ຳມັນເຊື້ອໄຟໃດທີ່ຍັງບໍ່ທັນລົງທະບຽນນຳໃຊ້ລະບົບ LNSW ແມ່ນໃຫ້ຮີບຮ້ອນລົງທະບຽນນຳໃຊ້ໂດຍໄວ ໂດຍສາມາດພົວພັນ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ.

ກາລຸນາຕິດຕໍ່ເບີ 020 59829365 ແລະ 020 28145652 ເພື່ອຂໍຮັບການຝຶກອົບຮົມ ແລະ ລົງທະບຽນໃຊ້ນຳຜ່ານລະບົບດັ່ງກ່າວ. ສຳຫຼັບ, ແບບຟອມສະເໜີນຳໃຊ້ລະບົບ ສາມາດດາວໂຫຼດໄດ້ໃນ www.Prob.laonsw.net ຫຼື ເວັບໄຊ www.laotradeportal.com

ສຳຫຼັບການນຳເຂົ້າຜ່ານດ່ານພາສີສາກົນອື່ນ ແມ່ນສາມາດສືບຕໍ່ນຳລະບົບເຈ້ຍແບບເກົ່າຈົນກວ່າຈະມີແຈ້ງການເພີ່ມເຕີມ

ດັ່ງນັ້ນ,ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ,

ນ. ມະນີວອນ ວົງໄຊ